ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ພະແນກຂໍ້ມູນຂ່າວສານ ແລະ ປະຊາສຳພັນ, ຫ້ອງການ ທຫລ
ໂທ/ແຟັກ 856 21 213109, 213110

# ກອງປະຊຸມເປີດກ້ວາງຄົບຄະນະບໍລິຫານງານພັກ ທຫລ ຄັ້ງທີ 9 ສະໄໝທີ IV




ໃນຕອນເຊົ້າຂອງວັນທີ 17 ສິງຫາ 2023 ເວລາ 8:00 ໂມງ-11:30 ໂມງ, ທີ່ຫ້ອງປະຊຸມໃຫຍ່ (ຊັ້ນ 7) ທະນາຄານແຫ່ງ ສປປ ລາວ (ທຫລ) ໄດ້ຈັດກອງປະຊຸມເປີດກ້ວາງຄົບຄະນະບໍລິຫານງານພັກ ທຫລ ຄັ້ງທີ 9 ສະໄໝທີ IV ຂຶ້ນ. ໂດຍການໃຫ້ກຽດເປັນປະທານກອງປະຊຸມຂອງ ສະຫາຍ ບຸນເຫຼືອ ສິນໄຊວໍຣະວົງ ເລຂາຄະນະບໍລິຫານງານພັກ ທຫລ, ຜູ້ວ່າການທະນາຄານແຫ່ງ ສປປ ລາວ ຊຶ່ງເຂົ້າຮ່ວມກອງປະຊຸມມີສະຫາຍ ຮອງເລຂາຄະນະບໍລິຫານງານພັກ ທຫລ, ບັນດາສະຫາຍ ຄະນະປະຈຳພັກ-ຄະນະບໍລິຫານງານພັກ ທຫລ, ເລຂາຄະນະພັກຮາກຖານ-ເລຂາໜ່ວຍພັກຮາກຖານ, ປະທານ/ເລຂາ ບັນດາອົງການຈັດຕັ້ງມະຫາຊົນ ທຫລ ແລະ ຫົວໜ້າເລຂາປະຈຳພາກ ທຫລ ເຂົ້າຮ່ວມທັງໝົດ 40 ສະຫາຍ.

**ຈຸດປະສົງຂອງການດຳເນີນກອງປະຊຸມເປີດກ້ວາງຄົບຄະນະບໍລິຫານງານພັກ ທຫລ ຄັ້ງທີ 9 ສະໄໝທີ IV** ໃນຄັ້ງນີ້ ແມ່ນເພື່ອປຶກສາຫາລືການຈັດຕັ້ງປະຕິບັດຕາມແບບແຜນການນຳພາ ແລະ ວິທີເຮັດວຽກຂອງຄະນະບໍລິຫານງານພັກທະນາຄານແຫ່ງ ສປປ ລາວ ສະໄໝທີ IV. ໂດຍໄດ້ສຸມໃສ່ການຈັດຕັ້ງປະຕິບັດວາລະແຫ່ງຊາດ ເພື່ອແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດການເງິນ-ເງິນຕາ ພ້ອມທັງເປັນການຜັນຂະຫຍາຍຜົນສຳເລັດຂອງກອງປະຊຸມຄົບຄະນະກາງສະໄໝຂອງຕົນທີ່ຫາກໍ່ສຳເລັດໃນລະຫວ່າງວັນທີ 19-20 ກໍລະກົດ 2023 ຜ່ານມາ. ນອກຈາກນີ້ຍັງໄດ້ຄົ້ນຄວ້າເຊື່ອມຊຶມ ແລະ ປະກອບຄຳຄິດຄຳເຫັນຕໍ່ບັນດາ

ເອກະສານແນວທາງການເມືອງທີ່ສຳຄັນຕົ້ນຕໍຈຳນວນໜຶ່ງເປັນຕົ້ນແມ່ນ: **1) ມະຕິກອງປະຊຸມຄົບຄະນະບໍລິຫານງານສູນກາງພັກ ຄັ້ງທີ 6 ສະໄໝທີ XI; 2) ບົດຫຼຸບຕີລາຄາການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ ຄັ້ງທີ IV ຂອງຄະນະບໍລິຫານງານພັກທະນາຄານແຫ່ງ ສປປ ລາວ ໄລຍະກາງສະໄໝຜ່ານມາ; 3) ບົດສະຫຼຸບຕີລາຄາການຈັດຕັ້ງປະຕິບັດແຜນຍຸດທະສາດການພັດທະນາລະບົບສະຖາບັນການເງິນ-ເງິນຕາ 5 ປີ (2021-2025); 4) ຮ່າງມະຕິວ່າດ້ວຍການແກ້ໄຂບັນຫາຂໍ້ຄົງຄ້າງໃນການຈັດຕັ້ງປະຕິບັດກອງປະຊຸມໃຫຍ່ ຄັ້ງທີ IV ຂອງຄະນະບໍລິຫານງານພັກທະນາຄານແຫ່ງ ສປປ ລາວ ໄລຍະກາງສະໄໝຜ່ານມາ.**




ຜ່ານການປຶກສາຫາລື ແລະ ປະກອບຄຳເຫັນໃນຄຳຖາມເຈາະຈີ້ມໃນທີ່ປະຊຸມ ປະທານກອງປະຊຸມຍັງໄດ້ຮຽກຮ້ອງໃຫ້ບັນດາສະຫາຍໃນທີ່ປະຊຸມ ຈົ່ງພ້ອມກັນຍົກສູງຄວາມຮັບຜິດຊອບ, ເສີມຂະຫຍາຍຫົວຄິດປະດິດສ້າງໃນການຕິດຕາມ-ຄົ້ນຄວ້າ ແລະ ປະກອບຄວາມເຫັນຕໍ່ຮ່າງມະຕິວ່າດ້ວຍການແກ້ໄຂບັນຫາຂໍ້ຄົງຄ້າງໃນການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ ຄັ້ງທີ IV ຂອງຄະນະບໍລິຫານງານພັກ ທຫລ ໄລຍະກາງສະໄໝຜ່ານມາຢ່າງພາວະວິໃສ, ສ້າງສັນ ແລະ ກົງໄປ-ກົງມາ ເພື່ອພ້ອມກັນ

ກຳນົດວິທີແກ້ໄຂບັນຫາ, ຂໍ້ຄົງຄ້າງໃນແຕ່ລະບັນຫາຢ່າງມີຈຸດສຸມ ແລະ ຮັບປະກັນລັກສະນະວິທະຍາສາດຢ່າງແທ້ຈິງ ເນື່ອງຈາກມະຕິດັ່ງກ່າວ ຈະເປັນແນວທາງທີ່ສຳຄັນໃຫ້ໃນການຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດວຽກງານຕົວຈິງໃນທ້າຍສະໄໝຢ່າງມີປະສິດທິຜົນສູງ.

ກອງປະຊຸມໄດ້ດຳເນີນເປັນເວລາເຄິ່ງວັນ ແລະ ປິດລົງດ້ວຍຜົນສຳເລັດອັນຈົບງາມ.




**ຂ່າວ ແລະ ພາບໂດຍ: ສອນໄຊ ສີຫາເທບ+ສົມພົດ ທຳມະວົງ**

*ເສດຖະກິດລາວຈະເຂັ້ມແຂງຖ້າປວງຊົນລາວຮ່ວມແຮງຮ່ວມໃຈນຳໃຊ້ເງິນກີບ*